ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

©©©©©©©©©©

ແຂວງເຊກອງ

ເຈົ້າແຂວງ

ເລກທີ 08 /ຈຂ.ຊກ

ເຊກອງ,ລົງວັນທີ 13.06.2016

# ຄຳແນະນຳ

## ຂອງເຈົ້າແຂວງ ກ່ຽວກັບ ການຈັດຕັ້ງປະຕິບັດຄຳສັ່ງຂອງທ່ານ ນາຍົກລັດຖະມົນຕີ ວ່າດ້ວຍການເພີ່ມທະວີຄວາມເອົາໃຈໃສ່ຕໍ່ວຽກງານທະບຽນສານ.

-ອີງຕາມ : ກົດໝາຍການປົກຄອງທ້ອງຖິ່ນ ແຫ່ງ ສ ປ ປ ລາວ ສະບັບເລກທີ 03 / ສພຊ, ລົງວັນທີ 21 ຕຸລາ 2003 , ໝວດ III ມາດຕາ 14 ວ່າດ້ວຍສິດ ແລະ ໜ້າທີ່ຂອງເຈົ້າແຂວງ.

-ອີງຕາມ : ກົດໝາຍ ວ່າດ້ວຍທະບຽນສານ ສະບັບເລກທີ 11 / ສພຊ, ລົງວັນທີ 26 ພະຈິກ 2009.

-ອີງຕາມ : ກົດໝາຍ ວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາສະບັບເລກທີ 01/ສພຊ,ລົງວັນທີ 8 ທັນວາ 2008

-ອີງຕາມ : ກົດໝາຍ ວ່າດ້ວຍການສ້າງນິຕິກຳ ສະບັບເລກທີ 19 / ສພຊ, ລົງວັນທີ 12 ກໍລະກົດ 2012.

-ອີງຕາມ : ຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 10 / ນຍ, ລົງວັນທີ 1 ເມສາ 2016 ວ່າດ້ວຍ ການເພີ່ມທະວີ ຄວາມເອົາໃຈໃສ່ຕໍ່ວຽກງານທະບຽນສານ.

-ອີງຕາມ : ໜັງສືສະເໜີຂອງພະແນກຍຸຕິທຳແຂວງ ສະບັບເລກທີ 537 /ພຍທ.ຂ, ລົງວັນທີ 30 / 5 / 2016.

ວຽກງານທະບຽນສານ ເປັນວຽກງານໜຶ່ງທີ່ມີບົດບາດສຳຄັນຂອງຂະແໜງຍຸຕິທຳ ໃນການຢັ້ງຢືນຄວາມຖືກຕ້ອງຕາມຄວາມເປັນຈິງ ແລະ ຕາມກົດໝາຍຂອງສັນຍາ ແລະ ເອກະສານອື່ນໆ, ແນ່ໃສ່ເພີ່ມທະວີນິຕິທຳ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງ, ປະກອບສ່ວນໃນການປົກປັກຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ພັດທະນາເສດຖະກິດ-ສັງຄົມ.

ຜ່ານການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍ ທະບຽນສານ ທີ່ປະກາດໃຊ້ມາແລ້ວ 20 ກວ່າປີ ແລະມີຫ້ອງການທະບຽນສານຢູ່ພະແນກຍຸຕິທຳເປີດຮັບໃຊ້ບໍລິການແລ້ວ ປະມານ 13 ປີ ເຫັນວ່າ ຄວາມຮັບຮູ້ ແລະ ຄວາມເຂົ້າໃຈ ຂອງສັງຄົມເຖິງຄວາມໝາຍຄວາມສຳຄັນ, ຜົນປະໂຫຍດທີ່ຈະໄດ້ຮັບຈາກການຢັ້ງຢືນ ໂດຍອົງການທະບຽນສານ ຍັງບໍ່ທັນກວ້າງຂວາງ, ເລິກເຊິ່ງ ແລະ ຍັງມີຄວາມເຂົ້າໃຈບໍ່ທັນຈະແຈ້ງ ລະຫວ່າງ ພາລະບົດບາດ, ສິດ ແລະ ໜ້າທີ່ຂອງອົງການທະບຽນສານ ແລະ ສານປະຊາຊົນ, ການຢັ້ງຢືນ ແລະ ການຈົດທະບຽນສານ ຫລາຍພາກສ່ວນຍັງຖືເບົາພາໃຫ້ເກີດມີຫລາຍສັນຍາ ຫລື ຫລາຍເອກະສານບໍ່ຖືກຕ້ອງ ຈຶ່ງເປັນສາເຫດພາໃຫ້ເກີດມີຂໍ້ຂັດແຍ່ງ, ສ້າງຄວາມສັບສົນໃຫ້ແກ່ການຈັດຕັ້ງພັກ - ລັດ ເຮັດໃຫ້ສັງຄົມບໍ່ມີຄວາມສະຫງົບ ເນື່ອງຈາກ ສັນຍາ ແລະ ເອກະສານນັ້ນບໍ່ຖືກຕ້ອງຕາມກົດໝາຍ

ແລະ ຄວາມເປັນຈິງ .

ເພື່ອສ້າງຄວາມຮັບຮູ້ ແລະ ເຂົ້າໃຈຂອງສັງຄົມ ກ່ຽວກັບ ວຽກງານທະບຽນສານ ແລະ ເຮັດໃຫ້ກົດໝາຍວ່າດ້ວຍ ທະບຽນສານ ແລະ ຄຳສັ່ງຂອງທ່ານ ນາຍົກລັດຖະມົນຕີໄດ້ຮັບການຈັດຕັ້ງປະຕິບັດຢ່າງເປັນເອກະພາບໃນທົ່ວປະເທດ ເວົ້າລວມ,ເວົ້າສະເພາະພາຍໃນແຂວງເຊກອງພວກເຮົາເພື່ອເປັນການຍົກສູງຄຸນນະພາບໃນການຢັ້ງຢືນສັນຍາ ແລະ ເອກະສານອື່ນໆໃຫ້ມີຄຸນຄ່າທາງດ້ານກົດໝາຍ, ເປັນຫລັກຖານໃຫ້ແກ່ກົນເອງ ແລະ ເພື່ອຄວາມສະດວກໃນເວລາເກີດຂໍ້ຂັດແຍ່ງ, ເປັນຫລັກຖານໃຫ້ແກການພິຈາລະນາຂອງສານ, ຮັບປະກັນການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງປະກອບສ່ວນເຂົ້າໃນການສ້າງຄວາມຍຸຕິທຳ ແລະ ສີວິໄລຂອງສັງຄົມ.

## ເຈົ້າແຂວງອອກຄຳແນະນຳ

1.ໃຫ້ບັນດາພະແນກການຕ່າງໆ, ອົງການທຽບເທົ່າ, 4 ຕົວເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງເອົາໃຈໃສ່ໃນການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍທະບຽນສານ ແລະ ນິຕິກຳຕ່າງໆ ກ່ຽວກັບ ວຽກງານທະບຽນສານຢ່າງເຂັ້ມງວດ, ຖືເອົາການເຄົາລົບ ແລະ ປະຕິບັດກົດໝາຍວ່າດ້ວຍ ທະບຽນສານ ເປັນຂະບວນໜຶ່ງທີ່ສຳຄັນໃນການສ້າງສັງຄົມໃຫ້ເປັນສັງຄົມທີ່ມີຄວາມຍຸຕິທຳ ແລະ ສີວິໄລຕາມແນວທາງຂອງພັກ - ລັດ ປະກອບສ່ວນອັນສຳຄັນເຂົ້າໃນພາລະກິດສ້າງສາ ແລະ ພັດທະນາເສດຖະກິດ-ສັງຄົມພາຍໃນແຂວງ ກໍ່ຄືຂອງຊາດ.

2.ໃຫ້ບັນດາພະແນກການ, ອົງການທຽບເທົ່າ, 4 ຕົວເມືອງ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງທັງພາກລັດ, ເອກະຊົນ, ພົນລະເມືອງທຸກຄົນໃນທົ່ວແຂວງ ຈົ່ງຮັບຮູ້ພ້ອມກັນປະຕິບັດຢ່າງເປັນເອກະພາບໃນທຸກໆສັນຍາ ແລະ ເອກະສານປະເພດຕ່າງໆທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງກົດໝາຍວ່າດ້ວຍ ທະບຽນສານເຊັ່ນ: ສັນຍາຊື້-ຂາຍ, ສັນຍາກູ້ຢືມ ສັນຍາເຊົ່າ, ສຳປະທານ, ຮັບເໝົາກໍ່ສ້າງ, ສັນຍາແຮງງານ, ສັນຍາຮຸ້ນສ່ວນ, ສັນຍາອື່ນໆ, ພິໄນກຳ,ກຳມະສິດສິນສົມສ້າງ ແລະ ຊັບເດີມຂອງຄູ່ຜົວ-ເມຍ, ເອກະສານສຳເນົາ, ລາຍເຊັນ ແລະ ລາຍໂປ້ມື, ການແປພາສາ, ຕົວບຸກຄົນທຽບກັບຮູບຖ່າຍ, ວັນເດືອນປີຍື່ນເອກະສານ ແລະ ເອກະສານອື່ນໆ ຈະຖືວ່າສັນຍາ ແລະ ເອກະສານທີ່ຖືກຕ້ອງສອດຄ່ອງ ແລະ ມີຄຸນຄ່າທາງດ້ານກົດໝາຍນັ້ນຕ້ອງໄດ້ຮັບການຢັ້ງຢືນຄວາມຖືກຕ້ອງຈາກອົງການທະບຽນສານເທົ່ານັ້ນ, ໃນກໍລະນີສັນຍາ ຫລື ເອກະສານທີ່ຍັງບໍ່ທັນໄດ້ຮັບການຢັ້ງຢືນຈາກອົງການທະບຽນສານ, ໃຫ້ອົງການຈັດຕັ້ງທີ່ກ່ຽວຂ້ອງແນະນຳ ບຸກຄົນ ນິຕິບຸກຄົນ ຫລື ການຈັດຕັ້ງນຳໄປຢັ້ງຢືນຄວາມຖືກຕ້ອງຈາກອົງການທະບຽນສານເສຍກ່ອນ.

3.ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ເອົາ ສັນຍາ ຫລື ເອກະສານມາຢັ້ງຢືນຄວາມຖືກຕ້ອງ ທາງດ້ານກົດໝາຍຈາກອົງການທະບຽນສານຕ້ອງຈ່າຍຄ່າທຳນຽມ ແລະ ຄ່າບໍລິການຕາມກົດໝາຍວ່າດ້ວຍທະບຽນສານ ແລະ ລັດຖະບັນຍັດຂອງປະທານປະເທດທີ່ປະກາດໃຊ້ແຕ່ລະໄລຍະ.

4.ພະແນກຍຸຕິທຳ ກໍ່ຄື ຂະແໜງຍຸຕິທຳຕ້ອງເພີ່ມທະວີຄວາມເອົາໃຈໃສ່ ປະສານສົມທົບ ແລະ ຊຸກຍູ້ບັນດາຂະແໜງການ, ອົງການຈັດຕັ້ງຕ່າງໆພາຍໃນແຂວງ, ຈັດຕັ້ງປະຕິບັດ ແລະ ໂຄສະນາກົດໝາຍວ່າດ້ວຍ ທະບຽນສານ, ນິຕິກຳ ກ່ຽວກັບວຽກງານທະບຽນສານໃຫ້ກວ້າງຂວາງ, ເລີກເຊິ່ງເພື່ອໃຫ້ບັນດາຂະແໜງການ, ອົງການຈັດຕັ້ງ ແລະ ພໍ່ແມ່ປະຊາຊົນຮັບຮູ້, ເຂົ້າໃຈເຖິງຄວາມໝາຍສຳຄັນ ແລະຜົນປະໂຫຍດທີ່ຈະໄດ້ຮັບຈາກການຢັ້ງຢືນຄວາມຖືກຕ້ອງຂອງບັນດາສັນຍາ ແລະ ເອກະສານຕ່າງໆ ໂດຍອົງການທະບຽນສານ.

5. ໃຫ້ຄະນະພັກ, ຄະນະພະແນກທີ່ກ່ຽວຂ້ອງ, ອຳນາດການປົກຄອງເມືອງ, ເອົາໃຈໃສ່ປັບປຸງກົງຈັກການຈັດຕັ້ງຂອງອົງການທະບຽນສານໃນຂັ້ນຂອງຕົນ, ໃນນີ້; ບ່ອນທີ່ມີການສ້າງຕັ້ງຂຶ້ນແລ້ວກໍ່ໃຫ້ກວດກາ ແລະ ປັບປຸງໃຫ້ມີຄວາມໜັກແໜ້ນເຂັ້ມແຂງທາງດ້ານການເມືອງ-ແນວຄິດ, ການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກ ບ່ອນໃດຫາກຍັງບໍ່ທັນມີການສ້າງຕັ້ງຫ້ອງການ ຫລື ໜ່ວຍງານທະບຽນສານ ກໍ່ໃຫ້ມີການຄົ້ນຄວ້າ ແລະ ດຳເນີນການສ້າງຕັ້ງໃຫ້ເປັນລະບົບຄົບຊຸດ, ພ້ອມທັງຊີ້ນຳ-ນຳພາອົງການດັ່ງກ່າວປະຕິບັດພາລະບົດບາດສິດ ແລະ ໜ້າທີ່ຂອງຕົນໃຫ້ຖືກຕ້ອງ ແລະ ຄົບຖ້ວນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ທະບຽນສານ.

6. ໃຫ້ຄະນະພັກ, ຄະນະພະແນກທີ່ກ່ຽວຂ້ອງ, ອຳນາດການປົກຄອງເມືອງ ເພີ່ມທະວີຄວາມເອົາໃຈໃສ່ໃກ້ຊິດຕິດແທດ ແລະ ສ້າງເງື່ອນໄຂອຳນວຍຄວາມສະດວກດ້ານຕ່າງໆ ເປັນຕົ້ນ ດ້ານງົບປະມານ, ສະຖານທີ່ເຮັດວຽກ, ພາຫານະ ແລະ ອຸປະກອນຮັບໃຊ້ທີ່ຈຳເປັນໃຫ້ອົງການດັ່ງກ່າວ ສາມາດປະຕິບັດພາລະບົດບາດສິດ ແລະ ໜ້າທີ່ຂອງຕົນໄດ້ຢ່າງເຕັມສ່ວນ ແນໃສ່ຮັບປະກັນການບໍລິການສັງຄົມດ້ວຍຄວາມວ່ອງໄວ, ຖືກຕ້ອງ ແລະ ມີປະສິດທິຜົນສູງ ປະກອບສ່ວນໃນການພັດທະນາເສດຖະກິດ-ສັງຄົມ; ພ້ອມກັນນັ້ນ, ກໍ່ໃຫ້ເອົາໃຈໃສ່ຄຸ້ມຄອງເງິນລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການໃນການຈົດທະບຽນສັນຍາ ແລະ ເອກະສານຕ່າງໆໃຫ້ຖືກຕ້ອງສອດຄ່ອງກັບກົດໝາຍ ແລະ ລະບຽບຂອງງົບປະມານ.

7. ໃຫ້ພະແນກຍຸຕິທຳເພີ່ມທະວີຄວາມເອົາໃຈໃສ່ໃນການກໍ່ສ້າງ, ບຳລຸງ ແລະ ຍົກລະດັບວິຊາສະເພາະ ໃຫ້ພະນັກງານທະບຽນສານຂັ້ນແຂວງ ແລະ ເມືອງ ດ້ວຍຫລາຍຮູບການ ເປັນຕົ້ນ ຝຶກອົບຮົມໄລຍະສັ້ນ, ໄລຍະຍາວ ໃຫ້ເປັນລະບົບຕໍ່ເນື່ອງ ເພື່ອໃຫ້ໄດ້ຜູ້ສຳນານງານ ຫລື ຜູ້ ຊ່ຽວຊານໃນວຽກງານດັ່ງກ່າວ, ແນໃສ່ຮັບປະກັນຄຸນນະພາບຂອງວຽກງານທະບຽນສານ , ຮັບປະກັນສະໜອງຂໍ້ມູນທີ່ຊັດເຈນໃຫ້ແກ່ການດຳເນີນຄະດີ ຕາມຂະບວນການຍຸຕິທຳໃຫ້ມີຄວາມວ່ອງໄວ ແລະ ຖືກຕ້ອງ ທັງຮັບປະກັນການຈັດຕັ້ງປະຕິບັດຄຳຕັດສິນຂອງສານໃຫ້ມີຄວາມເຂັ້ມງວດ ແລະ ສັກສິດຫລາຍຂຶ້ນ.

8. ມອບໃຫ້ພະແນກຍຸຕິທຳເປັນເຈົ້າການປະສານສົມທົບ, ຕິດຕາມ, ກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ ພ້ອມທັງສະຫຼຸບສັງລວມ ແລະ ລາຍງານໃຫ້ຂັ້ນເທິງຢ່າງເປັນປົກກະຕິເພື່ອຊາບ ແລະ ມີທິດຊີ້ນຳ.

9. ໃຫ້ບັນດາທ່ານຫົວໜ້າພະແນກການ, ອົງການລັດທຽບເທົ່າ, ເຈົ້າເມືອງ ແລະ ພາກສ່ວນກ່ຽວຂ້ອງຈົ່ງຮັບຮູ້ ແລະ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ຢ່າງເຂັ້ມງວດ.

10. ຄຳແນະນຳສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ເຈົ້າແຂວງ - ແຂວງເຊກອງ

ຄຳເພີຍ ບຸດດາວຽງ